ຄວາມເປັນມາຂອງ

# ຊົນຊາດລາວ



ສະພາບການໃນອານາຈັກລາວລ້ານຊ້າງ ຕອນປາຍ, ການຕົກເປັນຫົວເມືອງຂຶ້ນ ຂອງຕ່າງຊາດ ການຕໍ່ສູ້ຂອງປະຊາຊົນລາວ ບັນດາເຜົ່າ ເພື່ອເອກະລາດແຫ່ງຊາດ

ໂດຍ ມະຫາບຸນມີ ເທບສີເມືອງ

ເຫຼັ້ມ III

[illegible]

[illegible] 26/8/2011

[illegible]

# ຄວາມເປັນມາຂອງຊົນຊາດລາວ

## ເຫລັ້ມ III

## ສະພາບການໃນອານາຈັກລາວລ້ານຊ້າງ ຕອນປາຍ ການຕົກເປັນຫົວເມືອງຂຶ້ນຂອງຕ່າງຊາດ ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ເພື່ອເອກະລາດແຫ່ງຊາດ

ໂດຍ

ມະຫາບຸນມີ ເທບສີເມືອງ

ພິມເທື່ອທີ ໜຶ່ງ : ຈຳນວນ 3000 ສະບັບ

ສະຫງວນລິຂະສິດ

2011

# ຄວາມເປັນມາຂອງຊົນຊາດລາວ ເຫລັ້ມ III

ຂະໜາດປຶ້ມ : 14,8 x 21 ຊມ

ຜູ້ແຕ່ງແລະພິມຕົ້ນສະບັບ : ມະຫາບຸນມີ ເທບສີເມືອງ

ຖ່າຍພິກໂດຍ : ເພັດຊົມພູ ຕະກຸນສັກ

ພິສູດອັກສອນ : ສົມບາງ ເທບສີເມືອງ

ພິມເປັນປຶ້ມ: ໂຮງພິມສີສະຫວາດ, ນະຄອນຫລວງວຽງຈັນ.

ເລກທະບຽນການພິມຈຳໜ່າຍ: 067 ພຈ 03032011

ພິມເທື່ອທີ 1: ຄ.ສ. 2011 ຈຳນວນ 3000 ສະບັບ

ສະຫງວນລິຂະສິດ

**ໂດຍ: ມະຫາບຸນມີ ເທບສີເມືອງ**

# ໃບມອບຫຼຽນນາມມະຍົດ ສິລະປິນດີເດັ່ນ ປະຈຳປີ 2010 - 11



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ມອບຫຼຽນ

## ນາມມະຍົດ ສິລະປິນ ດີເດັ່ນ

ສາຂາ ...ວັນນະກຳ...

ໃຫ້ທ່ານ ...ທ່ານ ບຸນມີ ເທບສີເມືອງ...

ດຳລັດສະບັບເລກທີ ...091... / ນຍ ລົງວັນທີ ...11 / 06 / 2010 ນະຄອນຫຼວງວຽງຈັນ, ວັນທີ ...28... ເດືອນ ...06... ປີ ...2010...

ລົງທະບຽນເລກທີ ...19...

ນາຍົກລັດຖະມົນຕີແຫ່ງ ສ.ປ.ປ. ລາວ

ບົວສອນ ບຸບຜາວັນ

(1)

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ບຸນມີ ເທບສີເມືອງ

ຄວາມເປັນມາຂອງຊົນຊາດລາວ ເຫຼັ້ມ III : ສະພາບການໃນອານາຈັກລາວລ້ານຊ້າງ ຕອນປາຍ, ການຕົກເປັນທີ່ເມືອງຂຶ້ນຂອງຕ່າງຊາດ ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ເພື່ອເອກະລາດແຫ່ງຊາດ / ບຸນມີ ເທບສີເມືອງ -- ວຽງຈັນ : (ໂຮງພິມສີສະຫວາດ), 2011.

466 ໜ້າ : ພາບປະກອບສີ, ແຜນທີ່ ; 21 ຊມ.
ບັນນານຸກົມ : ໜ້າ 453-463

1. ລາວ--ປະຫວັດສາດ. I. ຊື່ເລື່ອງ.

959.4--dc21

ISBN 978-9932-00-007-4

# ຄຳນຳ

ຄວາມເປັນມາ ຂອງ ຊົນຊາດລາວ ໂດຍ ຜູ້ຂຽນ ຊື່ ບຸນມີ ເທບສີເມືອງ ເປັນທີ່ຮູ້ຈັກກັນດີ ໃນແວດວົງນັກອ່ານປະຫວັດສາດ ພື້ນຕຳນານກ່ຽວກັບ ບູຮານສະຖານສຳຄັນ ໃນດິນແດນທີ່ເປັນ ສປປ ລາວ ປັດຈຸບັນ. ປຶ້ມຂອງທ່ານອອກມາໃນໄລຍະເວລາທີ່ ຄົນຮຸ່ນໃໝ່ພວມສົນໃຈ ຢາກຮູ້ອະດີດຂອງ ປະເທດຊາດຂອງຕົນ, ເບິ່ງໃນແງ່ໜຶ່ງຄືວ່າຝົນກັບ ກະແສດີຈິຕອນ ທີ່ຄົນຮຸ່ນໃໝ່ໃຫ້ຄວາມສົນໃຈ ຫລາຍກວ່າປຶ້ມເຫຼັ້ມໃຫຍ່, ຕະຫຼາດການອ່ານແລະຈຳນວນຜູ້ອ່ານປຶ້ມຂະໜາດ 400 ກວ່າໜ້າ ເຊັ່ນ ຄວາມເປັນມາ ຂອງ ຊົນຊາດລາວ ເຫຼັ້ມ III ນີ້ ມີໜ້ອຍຫຼາຍ, ແຕ່ສຳນັກພິມດອກເກດ ແລະຜູ້ຂຽນ ກໍຢາກໃຫ້ປຶ້ມເຫຼັ້ມນີ້ໄປຮອດໄປເຖິງທ່ານຜູ້ອ່ານໃຫ້ຫຼາຍທີ່ສຸດ ເທົ່າທີ່ຈະຫຼາຍໄດ້ ດ້ວຍວ່າມີຂໍ້ມູນຫຼັກຖານບູຮານຄະດີ ແລະເອກະສານໃໝ່ໆຫຼາຍຢ່າງ ທັງຈາກພາຍໃນແລະຕ່າງປະເທດ ມາສັງລວມໄວ້ຢ່າງຄົບຖ້ວນ.

ນອກຈາກນີ້ ຜູ້ຂຽນເຊິ່ງມີຄວາມຮູ້ຢ່າງກວ້າງຂວາງ ຍັງໄດ້ຍົກເອົາເຫດການສຳຄັນ ຂອງປະເທດອ້ອມຂ້າງ ແລະໃນໂລກ ທີ່ມີຄວາມກ່ຽວພັນກັບເຫດການປະຫວັດສາດລາວ ມາປະກອບຕື່ມເພື່ອໃຫ້ທ່ານຜູ້ອ່ານໄດ້ ຮັບຮູ້ແລະມີຄວາມເຂົ້າໃຈ ສະຖານະການລາງບັ້ນ ລາງຕອນຫຼາຍຂຶ້ນ ເຊິ່ງອາດຈະເປັນປະໂຫຍດຕໍ່ວິຊາຊີບ, ການພົວພັນ, ການສຶກສາຄົ້ນຄວ້າດ້ານ ສັງຄົມສາດ ດ້ານມະນຸດສາດ ເສດຖະສາດ ການເມືອງ......ດ້ວຍວ່າວິຊາປະຫວັດສາດເປັນຈຸດລວມ ຂອງຄວາມຮູ້ດ້ານອື່ນໆຢ່າງນີ້. ການອ່ານປະຫວັດສາດ ຈຶ່ງທ້າທາຍໝົດທຸກຄົນທີ່ຢາກເຝິກຝົນຕົນເອງ ໃຫ້ມີຄວາມຮູ້ຄວາມເຂົ້າໃຈກວ້າງຂວາງ ມີສາຍຕາແລະທັດສະນະຮອບດ້ານເລິກເຊິ່ງຂຶ້ນ. ປຶ້ມເຫຼັ້ມນີ້ ຈຶ່ງສົມຄວນທີ່ທຸກໆຄົນບໍ່ວ່າຈະເປັນຄູສອນ ອາຈານ ນັກວິຊາການໃນພາກວິຊາໃດ ກໍຄວນຫາມາໄວ້ອ່ານປະດັບສະຕິປັນຍາ.

ຢູ່ໃນສ້ອຍໝາກປັດແກ້ວແຫ່ງປະຫວັດສາດ 450 ປີ ຂອງນະຄອນຫຼວງວຽງຈັນ "ຄວາມເປັນມາ ຂອງ ຊົນຊາດລາວ ເຫຼັ້ມ III" ຂອງ ທ່ານບຸນມີ ເທບສີເມືອງ ກໍເປັນແກ້ວເມັດງາມເມັດໜຶ່ງ ທີ່ຮ້ອຍຮວາດຢູ່ໃນສ້ອຍເສັ້ນນັ້ນ ຄືກັບປຶ້ມອື່ນໆ ອີກຫຼາຍຫົວ ທີ່ສຳນັກພິມດອກເກດ ໄດ້ຈັດພິມມາແລ້ວ ໃນຊຸດ "ມໍລະດົກວຽງຈັນ" ແລະບໍ່ວ່າຈະມີຄວາມຫຍຸ້ງຍາກ ແລະອຸປະສັກໃດໆກໍຕາມ ພວກເຮົາຈະບຸກໜ້າບືນຕົວສຸດຂີດ ເພື່ອສັນຫາຜົນງານທີ່ເປັນອຳມະຕະຫາຍາກ ແລະ ມີຄວາມໝາຍຕໍ່ປະຫວັດສາດຂອງຊາດມາຈັດພິມ. ທັງນີ້ໂດຍຫວັງວ່າ ມັນຈະປະກອບສ່ວນເຂົ້າໃນວົງການຄົ້ນຄວ້າພາສາສາດ ປະຫວັດສາດ ອັກສອນສາດ ວັນນະຄະດີລາວ.....ໃຫ້ມີຄວາມຈະເລີນກ້າວໜ້າຄຽງຄູ່ກັບ ພັດທະນາການດ້ານອື່ນໆຂອງຊາດ.

ຂໍຂອບໃຈຜູ້ອ່ານທຸກທ່ານ ທີ່ສະໜັບສະໜຸນຊ່ອຍຊື້ປຶ້ມທຸກຫົວ ຂອງສຳນັກພິມດອກເກດ, ມີຂໍ້ຂາດຕົກບົກພ່ອງປະການໃດ ຂໍທ່ານໄດ້ກະລຸນາ ແຈ້ງມາທາງສຳນັກພິມດ້ວຍ, ພວກເຮົາມີຄວາມຍິນດີຮັບເອົາຂໍ້ຄິດເຫັນ ຂອງ ທ່ານມາແກ້ໄຂປັບປຸງ ເພື່ອໃຫ້ຜົນງານສົມບູນທີ່ສຸດ ກາຍເປັນຂອງຂວັນລ້ຳຄ່າ ເປັນກະຕ່າຄວາມຮູ້ຂອງທຸກໆທ່ານ.

ວັນທີ 20 ຕຸລາ 2010

ສຳນັກພິມດອກເກດ

ດວງເດືອນ ບຸນຍາວົງ

# ຄຳເຫັນຂອງ
# ສະຖາບັນຄົ້ນຄວ້າປະຫວັດສາດ

ຜ່ານການອ່ານປຶ້ມ ຄວາມເປັນມາຂອງຊົນຊາດລາວ ເຫຼັ້ມທີ III ທີ່ທ່ານມະຫາບຸນມີ ເທບສີເມືອງ ເປັນຜູ້ລິດຈະນານັ້ນ ມີເນື້ອຫາສາລະດີ, ມີປະໂຫຍດຫຼາຍໃຫ້ແກ່ສັງຄົມ ແລະປະເທດຊາດ. ຄວນພິມອອກເຜີຍແຜ່ຢ່າງກວ້າງຂວາງ ເພາະວ່າເປັນການສ້າງຈິດສຳນຶກທີ່ດີ ໃຫ້ແກ່ຄົນລຸ້ນຫຼັງມີຄວາມຮັບຮູ້ ເຂົ້າໃຈກ່ຽວກັບປະຫວັດຄວາມເປັນມາ, ວິລະບຸລຸດລາວຜູ້ເກັ່ງກ້າ ແລະໂຊກຊາຕາກຳຂອງປະເທດຊາດຕົນເອງ ໃນອະດີດຜ່ານມາຄືແນວໃດ.

ເຖິງວ່າມັນຈະຜ່ານກາຍມາ ເປັນເວລາ ຫຼາຍຮ້ອຍປີແລ້ວ ກໍຕາມ ແຕ່ປະຫວັດສາດກໍຍັງແມ່ນປະຫວັດສາດຢູ່ ຊຶ່ງບໍ່ມີໃຜຈະລຶບລ້າງມັນໄດ້. ເປົ້າໝາຍຫຼັກ ກໍແມ່ນເພີ່ມທະວີຄວາມຮັບຮູ້ ທາງດ້ານວຽກງານແນວຄິດ, ນຳໃຈຮັກຊາດ, ພັດທະນາແນວຄິດຂອງຄົນລາວ, ສັງຄົມລາວ ແລະປະເທດຊາດ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ ໃນອະນາຄົດ.

ຂໍຊົມເຊີຍຜູ້ຂຽນ ທີ່ໄດ້ເອົາໃຈໃສ່ ໃນການຄົ້ນຄວ້າ ຮຽບຮຽງ ເປັນປຶ້ມຫົວນີ້ອອກມາ, ທ່ານໄດ້ມີຄວາມອົດທົນ ພະຍາຍາມສູງ ໃຊ້ເວລາ, ໃຊ້ຫົວຄິດພ້ອມດ້ວຍມັນສະໝອງ ໄດ້ກັ່ນຕອງ ພ້ອມທັງຄົ້ນຄວ້າວິໄຈ ເລີກເຊິ່ງພໍສົມຄວນ. ປຶ້ມຫົວດັ່ງກ່າວ ຈະກາຍເປັນຂໍ້ມູນທີ່ດີ, ມີຄຸນຄ່າທາງດ້ານວິທະຍາສາດສັງຄົມ ໃຫ້ລູກຫຼານໄດ້ຄົ້ນຄວ້າ ໃນຂັ້ນຕໍ່ໄປ..........ຫາກມີເວລາພຽງພໍ, ສຸຂະພາບເຂັ້ມແຂງ ກໍຂໍໃຫ້ທ່ານຈົ່ງສືບຕໍ່ ສ້າງຜົນງານໃຫ້ມີປຶ້ມຫົວໃໝ່ ອອກມາຕື່ມ.

ຂໍໃຫ້ທ່ານຈົ່ງໂຊກດີ, ມີຄວາມສຸກໃນຄອບຄົວ ພ້ອມທັງໜ້າທີ່ການງານເຖິ້ນ.

ຂອບໃຈ

ວຽງຈັນ, ວັນທີ 24 ມັງກອນ 2011

ຮ. ຫົວໜ້າສະຖາບັນຄົ້ນຄວ້າປະຫວັດສາດ

**ເພັງສະຫ້ອນ ວົງຈັນດີ**

## ອາລໍາພະບົດ

ປຶ້ມຄວາມເປັນມາ ຂອງຊົນຊາດລາວເຫລັ້ມນີ້ ເກີດຂຶ້ນມາໄດ້ດ້ວຍແຮງຈູງໃຈ ໃຝ່ສະແຫວງຫາສັດຈະທໍາ ເພື່ອຄວາມກະຈ່າງແຈ້ງກ່ຽວກັບປະຫວັດສາດ ຂອງຊົນຊາດລາວ ຊຶ່ງເປັນຊາດເກົ່າແກ່ບູຮານມີມາແລ້ວແຕ່ສະໄໝປະຖົມບູຮານ ເປັນເວລາຍາວນານຫລາຍພັນປີ. ຊົນຊາດລາວເຄີຍສ້າງຕັ້ງນະຄອນຣັດ, ເຄີຍມີອະຣິຍະທໍາທີ່ຈະເລີນຮຸ່ງເຮືອງມາໃນອະດີດຕະການຫລາຍພັນປີ ຊຶ່ງຊາວໂລກຮູ້ຈັກ ໃນນາມ ອານາຈັກອ້າຍລາວແລະ ອານາຈັກລາວລ້ານຊ້າງ, ແຕ່ອານາຈັກດັ່ງກ່າວ ໄດ້ສູນເສັຽເອກະລາດ ແລະ ລົ້ມສະລາຍໄປ ຍັງເຫລືອດິນແດນຜືນນ້ອຍໆໄວ້ ໃຫ້ປາກົດຊື່ໃນປັດຈຸບັນນີ້ວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ຊາວໂລກໃນຍຸກປັດຈຸບັນ ຍັງມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບ ປະຫວັດສາດຂອງຊົນຊາດລາວ ຄາດເຄື່ອນແລະສັບສົນເພາະວ່າຂໍ້ມູນກ່ຽວກັບປະຫວັດສາດ ຂອງຊົນຊາດລາວໃນປາງອະດີໄດ້ ຂາດຫາຍຫລື ສູນຫາຍໄປ, ຍັງບໍ່ທັນໄດ້ມີການສຶກສາຄົ້ນຄວ້າ ເຜີຍແຜ່ ຂໍ້ມູນທີ່ຖືກຕ້ອງພຽງພໍ.ຈາກຫລັກຖານຂໍ້ມູນ ທີ່ມີການຄົ້ນພົບໃໝ່ ໃນ ທ້າຍຄຣິດສະຕະວັດທີ 20 ຜ່ານມາ ແລະ ໃນຕົ້ນຄຣິດສະຕະວັດທີ 21 ນີ້ ເຮັດໃຫ້ຫລິງເຫັນໄດ້ຮ່ອງຮອຍປະຫວັດສາດຂອງຊົນຊາດລາວໃນປາງອະດີດອັນຍາວນານນັບໝື່ນປີ ເຊັ່ນ: ຂວານຫີນຕອກ, ຂວານຫີນຝົນ, ແລະຂວານທອງເຫລືອງ ທີ່ເມືອງວັງວຽງ ແຂວງວຽງຈັນ, ຮູບແຕ້ມ ຕາມໜ້າຜາ ແລະ ຝາຜະໜັງຖໍ້າຕ່າງໆ, ເສົາຫີນຕັ້ງ ທີ່ແຂວງຫົວພັນ, ໄຫຫີນທີ່ທົ່ງໄຫຫີນ ແຂວງຊຽງຂວາງ, ເຄື່ອງປັ້ນດິນເຜົາ ທີ່ເຫລົ່າປ່າໂກ ໃກ້ນະຄອນຫລວງວຽງຈັນ ແລະ ທີ່ບ້ານຊຽງ, ບ້ານນາດີ ຊຶ່ງຢູ່ທາງຝັ່ງຂວາແມ່ນໍ້າຂອງ. ນອກຈາກນີ້ ກໍຍັງມີສິລາຈາລຶກອັກສອນລາວທີ່ມີ ອາຍຸຫລາຍຮ້ອຍປີ ຈໍານວນຫລາຍ ທີ່ບັນພະບຸຣຸດລາວໄດ້ສ້າງໄວ້ ຕະຫຼອດເຖິງເສົາຫີນຕັ້ງທີ່ພຣະທາດຫລວງ ນະຄອນຫລວງວຽງຈັນ ລ້ວນແຕ່

ແມ່ນຫຼັກຖານສຳຄັນ ອີກສ່ວນໜຶ່ງ ທີ່ຈະຕ້ອງໄດ້ທົບທວນຄືນເຫດການທາງປະຫວັດສາດ ຫລື ຄວາມເປັນມາຂອງຊົນຊາດລາວ. ບັນດາຫຼັກຖານທາງດ້ານວັດຖຸ ທີ່ໄດ້ຄົ້ນພົບໃໝ່ນີ້, ໄດ້ສ່ອງແສງໃຫ້ເຫັນວິວັດທະນາການ ຂອງຄົນລາວບູຮານແຕ່ພັນປີຄືນໄປ ເຖິງໝື່ນປີ ໃນປາງອະດີດ ທີ່ມີວິວັດທະນາການມາຢ່າງຕໍ່ເນື່ອງ ຍາວນານ.

ປຶ້ມປະຫວັດສາດລາວ ທີ່ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ພິມອອກໃນປີ 2000 ນັ້ນ ກໍໄດ້ໃຫ້ຂໍ້ມູນ ທາງປະຫວັດສາດຂອງຊົນຊາດລາວ ສະໄໝອານາຈັກລາວລ້ານຊ້າງ ໄດ້ລະອຽດຊັດເຈນຫຼາຍສົມຄວນ, ແຕ່ຂໍ້ມູນກ່ຽວກັບຄວາມເປັນມາ ຂອງຊົນຊາດລາວ ໄລຍະກ່ອນອານາຈັກລາວລ້ານຊ້າງນັ້ນ ຍັງບໍ່ທັນມີພຽງພໍ, ຍັງມີຫຼາຍສະໄໝກ່ຽວກັບຄວາມເປັນມາຂອງຊົນຊາດລາວ ທີ່ຄວນສັງລວມຂໍ້ມູນມາສະເໜີ ຕໍ່ຊາວລາວ ແລະ ຊາວໂລກ ໃຫ້ໄດ້ຮູ້ ໄດ້ສຶກສາຄົ້ນຄວ້າ. ເພື່ອຄວາມກະຈ່າງແຈ້ງ ກ່ຽວກັບຄວາມເປັນມາຂອງ ຊົນຊາດລາວໃນປາງອະດີດ. ດ້ວຍເຫດນີ້ ຜູ້ຂຽນຈຶ່ງໄດ້ພຽນພະຍາຍາມ ສຶກສາຄົ້ນຄວ້າຂຽນຮຽບຮຽງຄືນໃໝ່ ກ່ຽວກັບເລື່ອງດັ່ງກ່າວ ຊຶ່ງມີຄວາມຕິດພັນກັນຢ່າງສະໜິດແໜ້ນ ລະຫວ່າງ ສປປ ລາວໃນປັດຈຸບັນ ແລະ ອານາຈັກອ້າຍລາວ ແລະອານາຈັກລາວລ້ານຊ້າງ, ອານາຈັກລາວໂຄດຕະບູນ, ອານາຈັກລາວທະວາຣາວະດີ, ອານາຈັກລາວໂຍນົກ ໃນປາງອະດີດ. ຜ່ານການສຶກສາຄົ້ນຄວ້າມາຫຼາຍປີ ຜູ້ຂຽນຈຶ່ງສາມາດສະຫລຸບສັງລວມເນື້ອໃນກ່ຽວກັບປະຫວັດສາດ ຫລື ຄວາມເປັນມາຂອງຊົນຊາດລາວໄດ້ ແລະໄດ້ວາງໂຄງຮ່າງການຂຽນປຶ້ມດັ່ງກ່າວນີ້ ໂດຍໄດ້ແບ່ງອອກເປັນ 2 ເຫຼັ້ມ ເພື່ອບໍ່ໃຫ້ໜາເກີນໄປ ແລະ ໃຫ້ສອດຄ່ອງກັບສະພາບເສດຖະກິດ ໃນປັດຈຸບັນ. ໄດ້ໃຫ້ຊື່ປຶ້ມວ່າ "ຄວາມເປັນມາຂອງຊົນຊາດລາວ" ຊຶ່ງເລີ່ມມາແຕ່ສະໄໝປະຖົມບູຮານເປັນຕົ້ນມາ ເພື່ອໃຫ້ທ່ານຜູ້ອ່ານ ມີຄວາມເຂົ້າໃຈແຈ້ງ ກ່ຽວກັບປະຫວັດຄວາມເປັນມາຂອງມະນຸດຊາດໃນ

ໂລກ ກຸ່ມໂຮໂມ ຊາປຽນ (Homo Sapiens) ແລະບັນພະບຸຣຸດຂອງຊົນຊາດລາວ ກໍແມ່ນໜໍ່ແໜງ ຂອງມະນຸດຊາດກຸ່ມດັ່ງກ່າວ. ບັນພະບຸຣຸດຂອງຊົນຊາດລາວ ເຄີຍມີຖິ່ນຖານຢູ່ຖ້ຳ ທີ່ພູເລີຍມາກ່ອນ ແລ້ວໄດ້ແຜ່ກະຈາຍໄປສູ່ດິນແດນຕ່າງໆ ທັງໃນເຂດອ່າງແມ່ນ້ຳຂອງຕອນເໜືອ ແລະ ອ່າງແມ່ນ້ຳຂອງຕອນໃຕ້. ປື້ມຄວາມເປັນມາ ຂອງຊົນຊາດລາວຊຸດນີ້ ຈະໃຫ້ຄວາມກະຈ່າງແຈ້ງແກ່ທ່ານຜູ້ອ່ານ ບໍ່ຫລາຍກໍໜ້ອຍ. ປື້ມຊຸດນີ້ ໄດ້ຈັດແບ່ງອອກເປັນ 2 ເຫລັ້ມ ດັ່ງນີ້:

## ຄວາມເປັນມາ ຂອງ ຊົນຊາດລາວ

ເຫລັ້ມ I: ການຕັ້ງຖິ່ນຖານແລະ ການສ້າງຕັ້ງອານາຈັກ

ເຫລັ້ມ II: ສັງລວມສະພາບການໃນອານາຈັກລາວລ້ານຊ້າງ

ປື້ມທັງ 2 ເຫລັ້ມນີ້ ຜູ້ຂຽນໄດ້ຊອກສຶກສາຄົ້ນຄວ້າ ເກັບກຳສັງລວມຂໍ້ມູນ ມາຈາກຫລາຍແຫລ່ງ, ໄດ້ຂຽນຮຽບຮຽງຂຶ້ນມາ ຈົນເປັນຮູບເຫລັ້ມ ແລ້ວສົ່ງໃຫ້ທ່ານຜູ້ຮູ້ຫລາຍທ່ານ ຊ່ວຍອ່ານ ຊ່ວຍປະກອບຄວາມເຫັນ, ແລ້ວໄດ້ເອົາມາປັບປຸງຄືນໃໝ່ໃຫ້ດີຍິ່ງຂຶ້ນ, ແຕ່ກໍອາດຍັງມີບາງບ່ອນ ທີ່ຍັງບໍ່ທັນສອດຄ່ອງເໝາະສົມ. ຫວັງວ່າຈະໄດ້ຮັບຄວາມອະໄພຈາກທ່ານຜູ້ຮູ້ ແລະທ່ານຜູ້ອ່ານ ທັງສົ່ງຂ່າວໃຫ້ແກ່ຜູ້ຂຽນເພື່ອປັບປຸງໃຫ້ເໝາະສົມດີຍິ່ງຂຶ້ນ. ໃນເບື້ອງຕົ້ນນີ້ ຈະໄດ້ຈັດພິມເຫລັ້ມ I ອອກມາກ່ອນ ເພື່ອຄຳນັບຮັບຕ້ອນ ວັນຊາດ ວັນທີ 2 ທັນວາ ຄ.ສ.2005 ຊຶ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີອາຍຸຄົບຮອບ 30 ປີ, ຫລັງຈາກນັ້ນ ຈຶ່ງຈະຈັດພິມເຫລັ້ມ II ໃນຂັ້ນຕໍ່ໄປ.

ຜູ້ຂຽນຂໍສະແດງ ຄວາມຮູ້ບຸນຄຸນ ແລະຂໍຂອບອົກຂອບໃຈບັນດາທ່ານທີ່ໄດ້ປະກອບສ່ວນໃຫ້ຂໍ້ມູນຕ່າງໆໃນການສຶກສາຄົ້ນຄວ້າຂຽນປື້ມຊຸດນີ້ຕະຫຼອດເຖິງບັນດາທ່ານ ທີ່ໄດ້ຊ່ວຍອ່ານຮ່າງເບື້ອງຕົ້ນ ແລະປະກອບຄຳຄິດເຫັນ, ລາຍລະອຽດກ່ຽວກັບ ລາຍຊື່ຂອງທ່ານເຫລົ່ານັ້ນ

ໄດ້ກ່າວໄວ້ໃນ ພາກທີ IV ນັ້ນແລ້ວ.

ທ້າຍສຸດ ຜູ້ຂຽນໄດ້ແປສາລະບານ ແລະໄດ້ສັງລວມເນື້ອໃນ ເປັນພາສາອັງກິດໄວ້ ເພື່ອໃຫ້ທ່ານທີ່ບໍ່ຖະໜັດພາສາລາວ ຈະໄດ້ໃຊ້ ປະໂຫຍດ ຈາກບົດດັ່ງກ່າວ.

ຫວັງວ່າ ປຶ້ມເຫລັ້ມນີ້ ຈະໃຫ້ປະໂຫຍດແກ່ທ່ານຜູ້ອ່ານ ຫລາຍສົມຄວນ ແລະ ຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບຄຳແນະນຳ ຈາກທ່ານຜູ້ອ່ານ ໃນໂອກາດຕໍ່ໄປ. ຈຶ່ງຂໍສະແດງຄວາມຂອບໃຈລ່ວງໜ້າ ມານະໂອກາດນີ້ ດ້ວຍ.

ທີ່ນະຄອນຫລວງວຽງຈັນ, ວັນທີ 30 ພະຈິກ ຄ.ສ. 2005

ຜູ້ຂຽນ

ບຸນມີ ເທບສີເມືອງ

ທີ່ບ້ານໂພນສະອາດ ໜ່ວຍ 03
ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ
ໂທ: 021412937, ມືຖື 020 55514245

"ລິຂະສິດປຶ້ມເຫລັ້ມນີ້ ເປັນຂອງຜູ້ຂຽນ"

# ຄຳຊີ້ແຈງ ກ່ຽວກັບ ການຈັດພິມ ເຫລັ້ມ III

ທ່ານຜູ້ອ່ານທີ່ນັບຖື ແລະຮັກແພງ, ປື້ມຄວາມເປັນມາຂອງຊົນຊາດລາວ ຊຸດນີ້ ໃນເບື້ອງຕົ້ນຄາດວ່າ ຈະພິມອອກເປັນສອງເຫລັ້ມ ຄື ເຫລັ້ມ I ແລະ ເຫລັ້ມ II. ໃນພາກປະຕິບັດຕົວຈິງ ປື້ມເຫລັ້ມ II ທີ່ກຳໜົດໄວ້ເດີມນັ້ນ ມີຄວາມຍາວ 800 ກວ່າໜ້າ ຈະບໍ່ສະດວກໃນການຊົມໃຊ້ ຈຶ່ງໄດ້ປຶກສາຫາລືກັບຜູ້ຮ່ວມງານ ໃກ້ຊິດຫລາຍຄົນ ໄດ້ມີຄວາມເຫັນເປັນເອກະພາບກັນວ່າ ຄວນແບ່ງເຫລັ້ມ II ນີ້ອອກເປັນສອງເຫລັ້ມ ຄື ເຫລັ້ມ II ແລະເຫລັ້ມ III. ໂດຍອີງຕາມເຫດຜົນດັ່ງກ່າວນີ້ ປື້ມຄວາມເປັນມາ ຂອງຊົນຊາດລາວ ຊຸດນີ້ ຈຶ່ງມີ 3 ເຫລັ້ມດັ່ງນີ້.

ເຫລັ້ມ I ກ່າວເຖິງຄວາມເປັນມາ ຂອງ ຊົນຊາດລາວ ແຕ່ປະຖົມບູຮານ ມາເຖິງສະໄໝພຣະເຈົ້າຟ້າງຸ່ມ ສ້າງຕັ້ງອານາຈັກລາວລ້ານຊ້າງ.

ເຫລັ້ມ II ກ່າວເຖິງສະພາບການໃນປະເທດອ້ອມຂ້າງ, ໃນອານາຈັກລາວລ້ານຊ້າງຕອນຕົ້ນ ແລະ ວິວັດທະນາການດ້ານອະຣິຍະທຳ ຂອງຊົນຊາດລາວ.

ເຫລັ້ມ III ກ່າວເຖິງສະພາບການ ໃນອານາຈັກລາວລ້ານຊ້າງຕອນປາຍ, ການຕົກເປັນທີວເມືອງຂຶ້ນຂອງຕ່າງຊາດ ແລະ ການຕໍ່ສູ້ຂອງປະຊາຊົນລາວ ບັນດາເຜົ່າ ເພື່ອຄວາມເປັນເອກະລາດແຫ່ງຊາດ.

ເນື້ອໃນຂອງເຫລັ້ມ III ນີ້ ມີ 466 ໜ້າ ຄິດວ່າຄົງບໍ່ໜາເກີນໄປ. ການຂຽນປະຫວັດສາດ ອານາຈັກລາວລ້ານຊ້າງ ແມ່ນການກ່າວເຖິງເຫດການໃນປາງອະດີດ ພາຍໃຕ້ລະບອບສັກດີນາອາດຍາສິດ ມີຄວາມຈຳເປັນຕ້ອງໄດ້ກ່າວເຖິງ ກະສັດແຕ່ລະອົງ ທີ່ຂຶ້ນປົກຄອງປະເທດ ວ່າມາຈາກໃສ ມາດ້ວຍວິທີໃດ ຈຸດພິເສດຂອງກະສັດແຕ່ລະອົງ ເປັນແນວໃດ, ບັນຍາກາດສະພາບແວດລ້ອມເປັນແນວໃດ. ເມື່ອກຳໄດ້ຂໍ້ມູນ ເຫລົ່ານີ້ແລ້ວ ກໍຈະມີຈິນຕະນາການທີ່ຖືກຕ້ອງ ແລະມອງເຫັນພາບລວມ ຂອງເຫດການໄດ້ດີຍິ່ງຂຶ້ນ.

ຜູ້ຂຽນໄດ້ໃຊ້ຄຳສັບ ເອີ້ນຊື່ກະສັດແຕ່ລະອົງ ທີ່ຂຶ້ນປົກຄອງປະເທດ ດ້ວຍການຣາຊາພິເສກວ່າ "ພຣະເຈົ້າ" , ສຳລັບກະສັດທີ່ອາຍຸຍັງນ້ອຍ, ບໍ່ທັນໄດ້ຣາຊາພິເສກ ໄດ້ໃຊ້ຄຳວ່າ "ເຈົ້າ, ພຣະ...." ເປັນຊື່ນຳໜ້າ. ກ່ຽວກັບພາສາທີ່ໃຊ້ ໃນການຂຽນປຶ້ມນີ້ ໄດ້ໃຊ້ພາສາລາວເດີມເປັນຫລັກ. ສຳລັບຄຳສັບທີ່ເປັນພາສາບາລີ, ສັນສະກຣິດ ແລະຄຳສັບພາສາອື່ນໆ ຫາກບໍ່ຈຳເປັນແທ້ໆ ກໍບໍ່ໄດ້ໃຊ້ ເຊັ່ນ ຄຳວ່າ ບິດາ, ມານດາ, ບຸດຕາ, ບຸດຕີ, ກຸມານ, ກຸມາຣີ ເປັນຕົ້ນ, ຜູ້ຂຽນໄດ້ໃຊ້ຄຳວ່າ ພໍ່, ແມ່, ລູກຊາຍ, ລູກຍິງ ແທນ ເຊິ່ງມີຄວາມໝາຍດຽວກັນ ແລະຄົນລາວທົ່ວໄປ ກໍສາມາດອ່ານເຂົ້າໃຈໄດ້ດີກວ່າ ທັງເປັນການໃຫ້ກຽດແກ່ພາສາລາວນຳອີກ.

ໃນປຶ້ມເຫລັ້ມ II ແລະ ເຫລັ້ມ III ຜູ້ຂຽນໄດ້ໃຊ້ຄຳວ່າ "ມະຫາ" ໄວ້ທາງໜ້າຊື່ຂອງຜູ້ຂຽນ ຈາກນາມະຍົດທີ່ໄດ້ມາ ຈາກການສຶກສາທາງພຸດທະສາດສະໜາ ທີ່ເສັງໄດ້ຊັ້ນມະຫາປະຣຽນ ເພື່ອໃຫ້ກຽດແກ່ສະຖາບັນພຸດທະສາດສະໜາ ທີ່ໄດ້ສິດສອນວິຊາຄວາມຮູ້ພື້ນຖານໃຫ້ແກ່ຜູ້ຂຽນ ໄດ້ເອົາມານຳໃຊ້ ໃຫ້ຂະຫຍາຍກວ້າງອອກໄປ.

ສຸດທ້າຍນີ້ ຂໍຂອບໃຈບັນດາທ່ານ ທີ່ໄດ້ໃຫ້ຄວາມຊ່ວຍເຫລືອຮ່ວມມື ໃນການຂຽນປຶ້ມຊຸດນີ້ ທຸກໆທ່ານ ແລະ ຂໍຂອບໃຈທ່ານຜູ້ອ່ານທຸກທ່ານ ທີ່ໄດ້ໃຫ້ການສະໜັບສະໜູນ. ຫາກບັນດາທ່ານມີຄວາມຄິດເຫັນໃດໜຶ່ງ ທີ່ຢາກຕຳໜິ ສົ່ງຂ່າວ ເພື່ອປັບປຸງປຶ້ມນີ້ ໃຫ້ດີຍິ່ງຂຶ້ນ ໃນໂອກາດຕໍ່ໄປ, ຜູ້ຂຽນຂໍນ້ອມຮັບດ້ວຍຄວາມຍິນດີ ແລະຮູ້ບຸນຄຸນ.

ນະຄອນຫລວງວຽງຈັນ, ວັນທີ 8 ຕຸລາ 2010.

ມະຫາບຸນມີ ເທບສີເມືອງ

# ຄວາມເຫັນຈາກທ່ານຜູ້ອ່ານ
## ກ່ຽວກັບປຶ້ມ ຄວາມເປັນມາ ຂອງ ຊົນຊາດລາວ ເຫລັ້ມ III

ຂ້າພະເຈົ້າໄດ້ຮັບກຽດໃຫ້ອ່ານຄືນ ບົດຂຽນຂອງ ທ່ານມະຫາບຸນມີ ເທບສີເມືອງ ທັງສາມເຫລັ້ມ ກໍຂໍຊົມເຊີຍຢ່າງຈິງໃຈ ໃນຄວາມອຸດສາ ສູ້ທົນຄົ້ນຄວ້າ ເພື່ອເກັບກຳຂໍ້ມູນ ມາຂຽນປຶ້ມ ກ່ຽວກັບຄວາມເປັນມາຂອງ ຊົນຊາດລາວ ດ້ວຍເນື້ອໃນທີ່ເປັນຕົນເອງ.

ເມື່ອຂ້າພະເຈົ້າອ່ານປຶ້ມ ທີ່ທ່ານມະຫາບຸນມີ ເທບສີເມືອງ ເອົາມາໃຫ້ອ່ານນີ້ແລ້ວ ກໍເຫັນວ່າ ເພິ່ນພິຖີພິຖັນ ໃນດ້ານຕ່າງໆ ດີອີ່ຫລີ ຄື:

- ບ່ອນອີງ ຂໍ້ມູນຂອງເພິ່ນ ກໍຮັ່ງມີສົມຄວນ ແລະເປັນເອກະສານຈາກແຫລ່ງຫລາຍພາສາ ເພື່ອຄວາມແນ່ນອນ ຂອງການຮຽບຮຽງເນື້ອໃນ,

- ຮູບປະກອບປຶ້ມກໍຫລາກຫລາຍ ມີທັງທີ່ມາຈາກແຫລ່ງທີ່ມີຢູ່ແລ້ວ ແລະທີ່ທ່ານໄປເກັບກຳຖ່າຍມາເອງ ຈາກສະຖານທີ່ປະຫວັດສາດທັງຢູ່ໃນລາວ ແລະທີ່ອື່ນ ເຊັ່ນ ຈາກປະເທດເພື່ອນບ້ານ,

- ການຮຽບຮຽງເນື້ອໃນນັ້ນ ກໍມີທັດສະນະຊີ້ນຳທີ່ສະແດງອອກເຖິງ ຄວາມຮັກຊາດລາວ ອັນດູດດື່ມ.

ຈາກຈຸດເດັ່ນ ທີ່ກ່າວມາຂ້າງເທິງນີ້ ຂ້າພະເຈົ້າເຊື່ອແນ່ວ່າ ຜົນງານຂອງທ່ານນັ້ນ ບໍ່ພຽງແຕ່ຈະເປັນຄັງສາງຂໍ້ມູນທີ່ຮັ່ງມີ ໃຫ້ແກ່ນັກຄົ້ນຄວ້າ "ປະຫວັດສາດຂອງຊາດລາວເທົ່ານັ້ນ" ແຕ່ຍັງເປັນເນື້ອໃນ ທີ່ປຸກລະດົມນ້ຳໃຈຮັກຊາດລາວ ຮັກດິນດອນຕອນຫຍ້າ ຜືນແຜ່ນດິນອັນຄົບຖ້ວນຂອງ ຊາດລາວ ແລະ ວັດທະນະທຳລາວ ທີ່ມີມາແຕ່ດຶກດຳບັນ.

ໃນໂອກາດນີ້ ຂ້າພະເຈົ້າຂໍອວຍພອນໃຫ້ທ່ານ ມີສຸຂະ ພະລານາໄມ ແຂງແຮງ ປາສະຈາກໂຣກໄພ ໄຂ້ເຈັບ ເພື່ອໃຫ້ໄດ້ສືບຕໍ່ກິດຈະກໍາການຂຽນປະຫວັດສາດ ໄວ້ເຕືອນໃຈຄົນຮຸ່ນຫລັງ ໃຫ້ຮູ້ວ່າເກີດມາເປັນລາວແລ້ວ ມີປະຫວັດສາດທີ່ຄວນທະນົງໃຈ ແລະມີນໍ້າໃຈຮັກຊາດ ປົກປັກຮັກສາຊາດລາວ ໃຫ້ຄົງຢູ່ຊົ່ວກາລະນານ.

ວຽງຈັນ, ວັນທີ 12 ຕຸລາ 2010

ສຸວັນນະລາດ ໄຊຍະວົງ.

# ສາລະບານ

**ຫົວຂໍ້** **ໜ້າ**


1. ໃບຍັ້ງຢືນລາງວັນປຶ້ມດີເດັ່ນ (1)
2. ຄຳນຳຂອງສຳນັກພິມດອກເກດ (3)
3. ຄຳເຫັນຂອງສະຖາບັນຄົ້ນຄວ້າປະຫວັດສາດ (5)
4. ອາລຳພະບົດ (7)
5. ຄຳຊີ້ແຈງ ກ່ຽວກັບການພິມ ເຫລັ້ມ III (11)
6. ຄວາມເຫັນຈາກທ່ານຜູ້ອ່ານ (13)
7. ລາຍຊື່ກະສັດລາວ ທີ່ປົກຄອງປະເທດ ແຕ່ປີ ຄ.ສ.1271-1975 1


## ພາກທີ I


**ອານາຈັກລາວລ້ານຊ້າງວຽງຈັນ** 13

1. ຣາຊະການພຣະເຈົ້າໄຊຍະເຊດຖາທິຣາດທີ 2 13
2. ຣາຊະການເຈົ້າອຸປະຣາດລອງ 17
3. ຣາຊະການພຣະເຈົ້າສິຣິບຸນຍະສານ 18
   - ເກີດສົງຄາມກັບອານາຈັກສະຫຍາມ 27
   - ຕົກເປັນຫົວເມືອງຂຶ້ນຂອງສະຫຍາມ 38
4. ຣາຊະການເຈົ້ານັນທະເສນ 40
   - ເຫດການສຳຄັນໃນສະໄໝເຈົ້ານັນທະເສນ 43
   - ເກນພົນລະເມືອງລາວ ໄປສ້າງເມືອງບາງກອກ 49
   - ເຈົ້ານັນທະເສນຖືກຟ້ອງວ່າເປັນກະບົດ 54
5. ຣາຊະການເຈົ້າອິນທະວົງ 57
   - ໄປຕີເອົາຫົວເມືອງທາງຝ່າຍເໜືອ 57
   - ໄປຊ່ວຍສະຫຍາມຕີພະມ້າທີ່ເມືອງຊຽງໃໝ່ 59
   - ໄປຊ່ວຍສະຫຍາມຕີພະມ້າທີ່ເມືອງຊຽງແສນ 61

6. ຣາຊະການເຈົ້າອະນຸວົງ 64
- ໄປຕີເມືອງຊຽງຮຸ່ງຊ່ວຍສະຫຍາມ 66
- ການສ້າງບ້ານແປງເມືອງ 68
- ວຽກງານປ້ອງກັນຊາດ 74
- ວຽກງານການເມືອງແນວຄິດ 82
- ຄວາມຂັດແຍ່ງຂັ້ນແຕກຫັກກັບບາງກອກ 89
- ປະຕິບັດແຜນຍຸດທະສາດປົດປ່ອຍຊາດ 96
- ສະຫຍາມຈັດກອງທັບສູ້ຮົບກັບລາວ 103
- ການສູ້ຮົບລະຫວ່າງສະຫຍາມກັບລາວ 108
- ກອງທັບສະຫຍາມເຜົາທຳລາຍເມືອງວຽງຈັນ 114
- ຮູບພາບຈຳນວນໜຶ່ງກ່ຽວກັບເມືອງວຽງຈັນ 125

# ພາກທີ II

## ອານາຈັກລາວລ້ານຊ້າງຈຳປາສັກ 133

1. ຣາຊະການພຣະເຈົ້າສ້ອຍສີສະໝຸດພຸດທາງກູນ 133
2. ຣາຊະການພຣະເຈົ້າໄຊຍະກຸມມານ 135
- ຕົກເປັນຫົວເມືອງຂຶ້ນຂອງສະຫຍາມ 137
3. ຣາຊະການພຣະວິໄຊຍະຣາດຂັດຕິຍະວົງສາ 141
4. ຣາຊະການເຈົ້າໜໍ່ເມືອງ 142
5. ຣາຊະການເຈົ້າໝານ້ອຍ 142
6. ຣາຊະການເຈົ້າຣາຊະບຸດ (ໂຍ້) 143
- ກອບກູ້ເອກະລາດປົດແອກສະຫຍາມ 143
7.ຣາຊະການເຈົ້າຮຸຍ 143

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ